# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 25 ເມສາ 2010 (04-25-2010)

---

**ການສນັບສນູນອັນຖືກຕ້ອງ:**

**ຂໍ້ພຣະຄັມພີໃນບົດຮຽນ:** (2 ໂກຣິນໂທ 8:8-15; 9:6-11)

**ເປົ້າໝາຍຂອງບົດຮຽນ:**

ບົດຮຽນນີ້ເວົ້າເຖິງການຖວາຍເງິນເພື່ອການຮັບໃຊ້ໃນຄຣິສຕະຈັກຂອງທ່ານ.

**ຄວາມສໍາຄັນຂອງບົດຮຽນ:**

ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ສນັບສນູນຊັບສິນຕໍ່ການຮັບໃຊ້ໃນຄຣິສຕະຈັກຂອງທ່ານ

**ຜົນສະທ້ອນຕໍ່ຊີວິດ:**

ການຮັບໃຊ້ນີ້ ຕ້ອງໄດ້ໃຊ້ເງິນ, ແຕ່ເຫັນວ່າສະມາຊິກຫລາຍຄົນຖວາຍຕາມມີຕາມເກີດ ເພື່ອການຮັບໃຊ້ນີ້ ແລະກໍມີອີກຫລາຍຄົນບໍ່ໄດ້ຖວາຍເລີຍ. ບົດຮຽນນີ້ຈະທ້າທາຍທ່ານໃຫ້ຜູ້ທີ່ເຊື່ອ ຖວາຍເງິນດ້ວຍຄວາມຍິນດີ ເພື່ອການຮັບໃຊ້.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊີ້ນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນໍາ:**

- ບໍ່ເປັນການງ່າຍເລີຍສໍາລັບຄົນທີ່ຮັ່ງມີທີ່ຈະຖວາຍ, ໃຫ້ຊອກຫາເຣື່ອງຕລົກ ຈັກສອງ ສາມເຣື່ອງມາເລົ່າໃນການເປີດຫ້ອງຮຽນເພື່ອປຸກອາຣົມໃຫ້ປອດໂປ່ງຄື ເຣື່ອງການຖວາຍເງິນສນັບສນູນ.
- ການຊ່ອຍເຫລືອອັນຖືກຕ້ອງ ທີ່ຊີ້ໃຫ້ເຫັນເຖິງໃຈຈິງ. ຊຶ່ງບົດຮຽນນີ້ໄດ້ທ້າທາຍຜູ້ທີ່ເຊື່ອໃຫ້ສນັບສນູນດ້ານການເງິນເພື່ອການປະກາດຂ່າວປະເສີດຂອງພຣະຄຣິດ ໂດຍການຖວາຍດ້ວຍຄວາມຍິນດີ.
- ໃນປີ 2007 ທາງອົງການ ທົບທາງແຫ່ງຊີວິດບັບຕິສໄດ້ສໍາຣວດ ແລະໄດ້ສລຸບວ່າພວກໂປຣແຕັສຕັງມີ 53% ທີ່ໄດ້ຖືກຮຽກຮ້ອງໃຫ້ຖວາຍ 10% ຂອງລາຍໄດ້ກ່ອນຕັດແທັກ ຫລືຫລາຍກວ່ານັ້ນໃຫ້ແກ່ໂບດ.
- ຄຣິສຕະຈັກທ້ອງຖິ່ນຈະລົງທຶນໄວ້ເພື່ອການຮັບໃຊ້ຍາວນານໄດ້ແນວໃດ?

## 1. ການຖວາຍເປັນການສະແດງເຖິງຄວາມສັດຊື່: (2 ໂກຣິນໂທ 8:8-11)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 8:8-11
- ທ່ານມີຄວາມຮູ້ສຶກຢ່າງໃດໃນການຖວາຍຂອງທ່ານ?
- ແມ່ນຫຍັງທີ່ມາກີດກັ້ນການຖວາຍທີ່ສະແດງໃຫ້ເຫັນຄວາມຈິງໃຈຂອງທ່ານ?
- ມີຫຍັງແດ່ທີ່ເຮັດໃຫ້ດີຂຶ້ນສຳລັບຜູ້ທີ່ເຊື່ອທີ່ໄດ້ຖວາຍດ້ວຍຄວາມຮັກພຣະຄຣິດ?
- ຈຳໄວ້ວ່າຖ້າຈະໃຫ້ຂອງຂວັນຕ້ອງໃຫ້ດ້ວຍຄວາມພໍໃຈ ແລະຈິງໃຈ ດ້ວຍຄວາມຮັກ.
- ຈົ່ງອະທິບາຍເຖິງຄວາມທຸກຈົນຂອງພຣະເຢຊູຄຣິດວ່າເປັນແນວໃດ. ໜູນໃຈໃຫ້ນັກຮຽນອະທິບາຍເຖິງ
- ຄວາມຍາກຈົນຂອງພຣະຄຣິດໄດ້ກາຍມາເປັນຜົນຜູ້ຮັ່ງມີໃຫ້ຜູ້ທີ່ເຊື່ອທັງຫລາຍ.
- ຖາມວ່າ: ຄວາມທຸກຍາກຂອງພຣະຄຣິດໄດ້ເຮັດໃຫ້ພວກເຮົາຮັ່ງມີທາງໃດ?
- ທ່ານໂປໂລໄດ້ສັນນະສູດວ່າຊາວເມືອງໂກຣິນໂທເຂົາເຈົ້າຈະຖວາຍຢ່າງໃດ.

## ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ: (2 ໂກຣິນໂທ 8:8-11)

1. ການຊັ່ງຊາເບິ່ງລາຍໄດ້ຂອງພວກທ່ານເອງ ໃສ່ກັບຂອງຄົນອື່ນໆທີ່ເປັນການທົດສອບການຖວາຍດ້ວຍຄວາມຈິງໃຈແລ້ວວ່າເປັນແນວໃດ? ມັນເປັນຕົວຢ່າງໃນການທຳຕາມຫລືເປັນການສັ່ງໃຫ້ຍອມເຮັດ?
2. ພຣະຄຣິດກາຍມາເປັນຜູ້ທຸກຈົນແນວໃດ? ເປັນດ້ວຍເຫດໃດພຣະຄຣິດຈຶ່ງຍິນດີໃນການມາເປັນຜູ້ທຸກຈົນ?
3. ພຣະເຢຊູໄດ້ປະຄວາມຮັ່ງມີໄວ້ໃຫ້ໃຜແດ່?
4. ຈະໃຫ້ມີຄວາມຍິນດີໄດ້ຢ່າງໃດ, ໃນເມື່ອບໍ່ໄດ້ໃຫ້ຄົບຕາມທີ່ຄວນ?
5. ເປັນຫຍັງຈຶ່ງວ່າຄວາມຍິນດີເຮັດໃຫ້ທ່ານເຕັມໃຈຮັບຂອງຂວັນນັ້ນ?
6. ເປັນໄປໄດ້ບໍ່ວ່າ ຂອງຂວັນທີ່ໃຫ້ໄປນັ້ນເຮັດໃຫ້ມີຄວາມບໍ່ເຕັມໃຈຮັບ?

## 2. ການຖວາຍໄດ້ຊ່ວຍຄົນອື່ນ: (2 ໂກຣິນໂທ 8:12-15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 8:12-15
- ທ່ານໄດ້ຕັດສິນໃຈຖວາຍ ຫລືກຳນົດວ່າຈະຖວາຍເທົ່າໃດ ຫລາຍປານໃດບໍ່?
- ອີງຕາມຂໍ້ 12 ແມ່ນຫຍັງທີ່ເຮັດໃຫ້ມີຄວາມພໍໃຈຮັບຂອງຂວັນນັ້ນ? ຊຶ່ງຊີ້ໃຫ້ເຫັນວ່າພຣະເຈົ້າບໍ່ໄດ້ຊົງຕັດສິນພິພາກສາຄົນທີ່ມີແລ້ວ ແຕ່ມີໂອກາດຖວາຍ.
- ອີງການຊ່ວຍເຫລືອຜູ້ທີ່ອຶດຫິວໃນທົ່ວໂລກ ແລະໃຫ້ເງິນຊ່ວຍເຫລືອ ພາຍໃນປະເທດ ແລະອີງການການຊ່ວຍເຫລືອອາເມຣິກັນພາກເໜືອພ້ອມທັງສະເຕສຄອນເວັນເຊິນ ໄດ້ໃຫ້ການຊ່ວຍເຫລືອພວກຖືກພັຍແຜ່ນດິນໄຫວຕ່າງໆເພື່ອໃຫ້ໄດ້ຮັບບັນເທົາທຸກສຳລັບຜູ້ທີ່ເຊື່ອທັງຫລາຍ. ຕໍ່ໄປນີ້ແມ່ນບ່ອນຢູ່ທີ່ຖວາຍເຂົ້າໄປ (www.imb.org and www.namb.net)
- ໃຫ້ຜູ້ນຶ່ງອາສາສມັກແບ່ງຄຳພຍານວ່າຜູ້ໃດຜູ້ນຶ່ງໃນໂບດທີ່ໄດ້ຮັບການຊ່ວຍເຫລືອ ຫລືເຂົາເຈົ້າໄດ້ໃຫ້ຄວາມຊ່ວຍເຫລືອຜູ້ທີ່ມີຄວາມຕ້ອງການໂດຍຜ່ານທາງໂບດ. ເຊັ່ນຕົວຢ່າງ:
  ໄຟໄໝ້, ອຸບັດເຫດ, ປະຮ້າງ, ຄອບຄົວມີຄົນຕາຍ, ຕົກງານ, ເປັນພຍາດມະເຮັງ….ຊຶ່ງໄດ້ສະແດງອອກໂດຍສິ່ງທີ່ເຂົາເຈົ້າມີຄວາມຈຳເປັນຕ້ອງການໃນເວລາທີ່ໄດ້ຖືກບັນຫາຕ່າງໆເຫລົ່ານີ້.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ໂກຣິນໂທ 8:12-15)

1. ທ່ານໂປໂລໄດ້ແນະນຳຜູ້ທີ່ບໍ່ຢູ່ໃນຄວາມຕ້ອງການການຊ່ອຍເລືອໃຫ້ມີໃຈຊ່ອຍເຫລືອຜູ້ທີ່ມີຄວາມຈຳເປັນທີ່ຕ້ອງການຄວາມຊ່ອຍເຫລືອແມ່ນບໍ່?
2. ໃນການຖວາຍຫລາຍສິ່ງຫລາຍຢ່າງນັ້ນ ໄດ້ຄືນມາຫາສນອງຕໍ່ຜູ້ທີ່ຖວາຍແນວໃດ?
3. ທ່ານໂປໂລບອກໃຫ້ຄົນທັງຫລາຍຮູ້ວ່າທຸກຄົນມີຄວາມສເມີພາບກັນໃນສິ່ງທີ່ເຂົາເຈົ້າມີຢູ່ຢ່າງໃດ?
4. ທ່ານໂປໂລໄດ້ແນະນຳວ່າສິ່ງທີ່ເຮົາມີຢູ່ຄົນອື່ນກໍມີເໝືອນກັນນັ້ນຄືຄຳວ່າສເມີພາບທີ່ທ່ານໂປໂລໄດ້ເລືອກເອົາຂຶ້ນມາເວົ້າແມ່ນບໍ່?

3 . **<u>ການຖວາຍເປັນຜົນກຳໄຣຂອງຜູ້ຖວາຍ:</u>** (2 ໂກຣິນໂທ 9:6-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 9:6-11
- ຝ່າຍຈິດວິນຍານກໍມີການຫວ່ານອອກ ແລະມີຜົນເກັບກ່ຽວຢ່າງນັ້ນເໝືອນກັນ.
- ຜົນກຳໄຣທີ່ໄດ້ມາຜ່ານທາງການຫວ່ານ ແລະການເກັບກ່ຽວມີຄືແນວໃດແດ່?
- ອົງພຣະຜູ້ເປັນເຈົ້າຕ້ອງການຫຍັງຈາກຜູ້ທີ່ຖວາຍ?
- ການທີ່ຮູ້ຈັກວ່າພຣະເຈົ້າເປັນຜູ້ທີ່ມີຄວາມອຸດົມສົມບູນທຸກຢ່າງນັ້ນມີຄວາມສຳຄັນສຳລັບຜູ້ທີ່ຖວາຍແນວໃດແດ່?
- ການຮູ້ຈັກວ່າພຣະເຈົ້າມີສິ່ງທຸກຢ່າງຄົບບໍຣິບູນນັ້ນໄດ້ເຮັດໃຫ້ທ່ານມີການປ່ຽນແປງການຖວາຍບໍ່?
- ໃຫ້ສົນທະນາກັນໃນເຣື່ອງຜົນກຳໄຣຂອງການຖວາຍໃນຂໍ້ທີ 10-11.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ໂກຣິນໂທ 9:6-11

1. ການເກັບກ່ຽວ ແລະການຫວ່ານເປັນກົດບັງຄັບຢ່າງເດັດຂາດບໍ່?
2. ທ່ານຈະຮັບປະກັນໄດ້ບໍ່ວ່າທ່ານຈະໄດ້ເກັບກ່ຽວໃນສິ່ງທີ່ທ່ານໄດ້ຫວ່ານໄປ? ພຣະເຈົ້າຊົງຄວາມເມດຕາ ແລະທ່ຽງທັມໃນການເກັບກ່ຽວ ແລະຫວ່ານ? ສຳລັບຜູ້ທີ່ຖວາຍເດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ພວກເຮົາຖວາຍເພື່ອສະທ້ອນໃຫ້ເຫັນວ່າພວກເຮົາໄດ້ອຸທິດຕົນຕໍ່ພຣະຄຣິດທີ່ໄດ້ຊົງຖວາຍພຣະອົງເອງສຳລັບພວກເຮົາ.
- ພວກເຮົາຕ້ອງຍຶດຖືການຖວາຍຂອງພວກເຮົາເອົາໄວ້ຕລອດໄປ!
- ຜູ້ທີ່ເຊື່ອທຸກຄົນ, ຈາກຜູ້ທີ່ທຸກຈົນຕລອດເຖິງຜູ້ທີ່ຮັ່ງມີ, ໃຫ້ຖວາຍຢ່າງໃຈກວ້າງຂວາງ.
- ພຣະເຈົ້າຮັກຊື່ນຊົມຜູ້ທີ່ຖວາຍດ້ວຍໃຈກວ້າງຂວາງພ້ອມດ້ວຍການຂອບພຣະຄຸນແລ້ວພຣະເຈົ້າຈະຊົງເພີ້ມເຕີມໃຫ້ໂດຍພຣະອົງເອງ.